ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສໍາພັນ ຫ້ອງການ ທຫລ
ໂທ/ແຟກ (856-21) 213109, 213110

# ທຫລ ສະເຫຼີມສະຫຼອງວັນຕ້ານການສໍ້ລາດບັງຫຼວງສາກົນຄົບຮອບ 22 ປີ




ໃນວັນທີ 6 ກຸມພາ 2026 ທີ່ສະໂມສອນສະຖາບັນການທະນາຄານ, ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດພິທີສະເຫຼີມສະຫຼອງວັນຕ້ານການສໍ້ລາດບັງຫຼວງສາກົນ ຄົບຮອບ 22 ປີ (09 ທັນວາ 2003 - 09 ທັນວາ 2025) ໂດຍການເປັນປະທານຮ່ວມຂອງ ທ່ານ ວຽງສະຫວັນ ໄຊຍະວົງ ຫົວໜ້າກົມກວດກາ, ທຫລ ແລະ ທ່ານ ສຸພາວົງ ວັນທານຸວົງ ຫົວໜ້າກົມຕ້ານ ແລະ ສອບສວນການສໍ້ລາດບັງຫຼວງ, ອົງການກວດກາແຫ່ງລັດ, ມີຜູ້ເຂົ້າຮ່ວມ ຈາກບັນດາກົມພາຍໃນ ທຫລ, ບັນດາທະນາຄານທຸລະກິດ ແລະ ນັກສຶກສາສະຖາບັນການທະນາຄານ ຊຶ່ງເປັນຈຳນວນຫຼາຍກວ່າ 200 ທ່ານ.

ພິທີສະເຫຼີມສະຫຼອງໃນຄັ້ງນີ້ ເປັນການ ຍົກສູງ ແລະ ໃຫ້ຄວາມສຳຄັນຂອງວັນຕ້ານການສໍ້ລາດບັງຫຼວງສາກົນ, ຊຶ່ງ ສປປ ລາວ ໄດ້ລົງນາມໃນປີ 2003 ແລະ ໃຫ້ສັດຕະຍາບັນໃນປີດຽວກັນ ຊຶ່ງຕະຫຼອດໄລຍະເວລາ 22 ປີ ທີ່ຜ່ານມາ ສປປ ລາວ ໄດ້ປະຕິບັດສິດ ແລະ ພັນທະ ຂອງຕົນຢ່າງຕັ້ງໜ້າ ໃນຖານະເປັນປະເທດພາຄີຂອງສົນທິສັນຍາດັ່ງກ່າວ.



ພ້ອມກັນນີ້, ໃນພິທີດັ່ງກ່າວ ບັນດາຜູ້ເຂົ້າຮ່ວມຍັງໄດ້ຮັບຟັງການນຳສະເໜີຄວາມຮູ້ພື້ນຖານກ່ຽວກັບວຽກງານ ແລະ ບາງກົດໝາຍທີ່ກ່ຽວຂ້ອງກັບການຕ້ານການສໍ້ລາດບັງຫຼວງ ແລະ ການເຄື່ອນໄຫວວຽກງານການພົວພັນຮ່ວມມືກັບຕ່າງປະເທດຂອງ ອົງການຕ້ານການສໍ້ລາດບັງຫຼວງຂັ້ນສູນກາງ ແລະ ຈັດກິດຈະກຳ ຖາມ-ຕອບ, ພ້ອມທັງສົນທະນາແລກປ່ຽນຕິດພັນກັບວຽກງານຕ້ານການສໍ້ລາດບັງຫຼວງ ເພື່ອນຳໄປໝູນໃຊ້ເຂົ້າໃນການປະຕິບັດວຽກງານຕົວຈິງຢ່າງມີປະສິດທິພາບ.



ພິທີໄດ້ດຳເນີນເປັນເວລາເຄິ່ງວັນ ແລະ ໄດ້ສິ້ນສຸດລົງດ້ວຍຜົນສຳເລັດລົງຢ່າງຈົບງາມ ຕາມລະດັບຄາດໝາຍທີ່ວາງໄວ້.

**ຂ່າວ ແລະ ພາບ: ຫ້ອງການ ທຫລ**

ຢູ່ເມືອງລາວໃຊ້ເງິນກີບລາວ